ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000===-----

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1180 /ອຄ.ຄພນ

ນະຄອນຫລວງວຽງຈັນ,ວັນທີ 19 JUN 2012

# ແຈ້ງການ

ເຖິງ: ທ່ານ ຫົວໜ້າ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ.

ເລື່ອງ: ການຈັດຕັ້ງຜັນຂະຫຍາຍ ຂໍ້ຕົກລົງ ຂອງນາຍົກລັດຖະມົນຕີ ເລກທີ 32/ນຍ, ລົງວັນທີ 06 ມີນາ 2012 ວ່າດ້ວຍການຮັບຮອງເອົາຍັດຕິກອງປະຊຸມ ການຄຸ້ມຄອງປ່າໄມ້, ການກວດກາປ່າໄມ້ ແລະການທຸລະກິດໄມ້ຄັ້ງວັນທີ 25-26 ມັງກອນ 2012.

ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ: ເພື່ອຈັດຕັ້ງຜັນຂະຫຍາຍ ຂໍ້ຕົກລົງ ຂອງນາຍົກລັດຖະມົນຕີ ເລກທີ 32/ນຍ, ລົງວັນທີ 06 ມີນາ 2012 ວ່າດ້ວຍການຮັບຮອງເອົາຍັດຕິກອງປະຊຸມ ການຄຸ້ມຄອງປ່າໄມ້, ການກວດກາປ່າໄມ້ ແລະ ການທຸລະກິດໄມ້ຄັ້ງວັນທີ 25-26 ມັງກອນ 2012. ໃຫ້ປະກົດຜົນເປັນຈິງ ໃນຖານະທີ່ ກະຊວງອຸດສາຫະກຳ ແລະ ການຄ້າ ມີສ່ວນຮ່ວມຕາມພາລະບົດບາດຂອງຕົນ.

ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການໃຫ້ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງປະຕິບັດດັ່ງນີ້:

1. ເປັນເຈົ້າການໃນການຂາຍໄມ້ທ່ອນທີ່ຂຸດຄົ້ນຈາກທຸກແຫຼ່ງ ດ້ວຍຮູບການປະມູນແບບເປີດກ້ວາງ ຫຼື ທາບທາມລາຄາໃນລະດັບຊາດ ໂດຍເປີດກ້ວາງໃຫ້ທຸກໆ ໂຮງງານປຸງແຕ່ງໄມ້ ຢູ່ພາຍໃນ ແລະຕ່າງປະເທດມີສິດເຂົ້າຮ່ວມ;

2. ຮັບຜິດຊອບເຊັນສັນຍາຊື້-ຂາຍໄມ້ ແລະຄິດໄລ່ລາຄາພັນທະໄມ້ ພາຍຫລັງທີ່ ຂະແໜງກະສິກຳ ແລະ ປ່າໄມ້ ມອບບັນຊີໄມ້ ແລະໄມ້ຕົວຈິງຢູ່ສະໜາມສອງ. ບາງກໍລະນີຕ້ອງລົງເບິ່ງໄມ້ຕົວຈິງຈຶ່ງເຊັນສັນຍາຊື້-ຂາຍ;

3. ເປັນເຈົ້າການໃນການຄຸ້ມຄອງ, ກວດກາ, ຕິດຕາມສິ້ນເຂົ້າວັດຖຸດິບ ແລະສົ່ງອອກຜະລິດຕະພັນພາຍໃນໂຮງງານປຸງແຕ່ງໄມ້ໂດຍປະຕິບັດຕາມແຈ້ງການເລກທີ 0051/ອຄ.ກອກ, ລົງວັນທີ 13 ມັງກອນ 2009 ແນະນຳການຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍຮູບແບບ ແລະຂະໜາດຂອງຜະລິດຕະພັນໄມ້;

4. ການຂຶ້ນບັນຊີຜະລິດຕະພັນໄມ້ ໃຫ້ປະຕິບັດຕາມ ແຈ້ງການເລກທີ 506/ກອກ.ມຖ, ລົງວັນທີ 05 ກັນຍາ 2011 ກ່ຽວກັບແນະນຳການຂຶ້ນບັນຊີໄມ້;

5. ບໍ່ອະນຸຍາດໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ອອກໃບເຄື່ອນຍ້າຍ ຫຼື ໃບຕິດຕາມ ການເຄື່ອນຍ້າຍສິນຄ້າໃດໆ ຢູ່ພາຍໃນປະເທດຢ່າງເດັດຂາດ;

ການອອກໃບຕິດຕາມສິນຄ້າແມ່ນມອບໃຫ້ເຈົ້າຂອງສິນຄ້າເປັນຜູ້ ອອກແລະຮັບຜິດຊອບເອົາເອງ.

6. ການສົ່ງອອກໄມ້ທ່ອນ, ໄມ້ແປຮູບ(ໄມ້ເລື່ອຍ) ແລະຕໍໄມ້ ໃນກໍລະນີ ລັດຖະບານຕົກລົງ ກະຊວງອຸດສາຫະກຳ ແລະ ການຄ້າ ຈະແຈ້ງໃຫ້ ພະແນກອຸດສາຫະກຳ ແລະ ການຄ້າ ເພື່ອອອກໃບອະນຸຍາດສົ່ງອອກຕາມລະບຽບການ;

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງທ່ານ ເພື່ອຊາບ ແລະປະຕິບັດ, ພ້ອມດຽວກັນກໍແນະນຳໃຫ້ບັນດາຫົວໜ່ວຍທຸລະກິດນຳໄປຈັດຕັ້ງປະຕິບັດໃຫ້ຖືກຕ້ອງຕາມນີ້ດ້ວຍ.

ລັດຖະມົນຕີວ່າການ

ກະຊວງອຸດສາຫະກຳ ແລະ ການຄ້າ.

ດຣ. ນາມ ວິຍະເກດ

ນຳສົ່ງ:

- ຫ້ອງວ່າການສູນກາງພັກ;
- ຫ້ອງວ່າການສະພາແຫ່ງຊາດ;
- ຫ້ອງວ່າການລັດຖະບານ;
- ກະຊວງ ກະສິກຳ ແລະ ປ່າໄມ້;
- ກະຊວງ ການເງິນ;
- ຫ້ອງວ່າການປົກຄອງແຂວງ.
- ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ.